ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ 2115

ກະຊວງກະສິກຳ ແລະ ສິ່ງແວດລ້ອມ ເລກທີ /ກສ

ນະຄອນຫຼວງວຽງຈັນ, ວັນທີ 20 MAY 2026

# ຂໍ້ຕົກລົງ
## ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ
## ຂອງກອງຄຸ້ມຄອງອຸທິຍານແຫ່ງຊາດ ນາກາຍ-ນ້ຳເທີນ

- ອີງຕາມ ກົດໝາຍ ວ່າດ້ວຍປ່າໄມ້ (ສະບັບປັບປຸງ) ສະບັບເລກທີ 64/ສພຊ, ລົງວັນທີ 13 ມິຖຸນາ 2019;
- ອີງຕາມ ກົດໝາຍ ວ່າດ້ວຍສັດປ່າ ສະບັບເລກທີ 42/ສພຊ, ລົງວັນທີ 17 ກໍລະກົດ 2023;
- ອີງຕາມ ດຳລັດ ວ່າດ້ວຍການສ້າງຕັ້ງອຸທິຍານແຫ່ງຊາດ ນາກາຍ-ນ້ຳເທີນ ສະບັບເລກທີ 36/ນຍ, ລົງວັນທີ 15 ກຸມພາ 2019 ແລະ ດຳລັດ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງຄະນະກຳມະການບໍລິຫານອຸທິຍານແຫ່ງຊາດ ນາກາຍ-ນ້ຳເທີນ ສະບັບເລກທີ 76/ນຍ, ລົງວັນທີ 30 ມີນາ 2026;
- ອີງຕາມ ດຳລັດ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກະຊວງກະສິກຳ ແລະ ສິ່ງແວດລ້ອມ ສະບັບເລກທີ 534/ນຍ, ລົງວັນທີ 14 ສິງຫາ 2025;
- ອີງຕາມ ໜັງສືສະເໜີ ຂອງກົມຈັດຕັ້ງ ສະບັບເລກທີ 1118/ຈຕ, ລົງວັນທີ 08 ພຶດສະພາ 2026.

**ລັດຖະມົນຕີກະຊວງກະສິກຳ ແລະ ສິ່ງແວດລ້ອມ ຕົກລົງ:**

### ໝວດທີ 1
### ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ກຳນົດທີ່ຕັ້ງ, ພາລະບົດບາດ, ໜ້າທີ່, ຂອບເຂດສິດ, ໂຄງປະກອບການຈັດຕັ້ງ, ຫຼັກການ ແລະ ແບບແຜນວິທີເຮັດວຽກ ເພື່ອເປັນບ່ອນອີງໃຫ້ແກ່ການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກອງຄຸ້ມຄອງອຸທິຍານແຫ່ງຊາດ ນາກາຍ-ນ້ຳເທີນ ແນໃສ່ ຄຸ້ມຄອງ, ອະນຸລັກ, ປົກປັກຮັກສາ, ພັດທະນາ, ນຳໃຊ້ ປ່າໄມ້, ທີ່ດິນປ່າໄມ້, ຊັບພະຍາກອນປ່າໄມ້, ຊີວະນາໆພັນ, ແຫຼ່ງນ້ຳ, ອ່າງເກັບນ້ຳ ແລະ ປົກປັກຮັກສາສິ່ງແວດລ້ອມ ໄປຄຽງຄູ່ກັບການພັດທະນາຊີວິດການເປັນຢູ່ ຂອງປະຊາຊົນບັນດາເຜົ່າ ທີ່ອາໄສຢູ່ໃນ ແລະ ອ້ອມຂ້າງ ເຂດອຸທິຍານແຫ່ງຊາດ ນາກາຍ-ນ້ຳເທີນ ແລະ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມຂອງຊາດ ຕາມທິດສີຂຽວ ແລະ ຍືນຍົງ.

**ມາດຕາ 2 ທີ່ຕັ້ງ ແລະ ພາລະບົດບາດ**

ກອງຄຸ້ມຄອງອຸທິຍານແຫ່ງຊາດ ນາກາຍ-ນ້ຳເທີນ ຂຽນເປັນຕົວອັກສອນຫຍໍ້ວ່າ **"ກອຊ.ນທ"** ແມ່ນກົງຈັກການຈັດຕັ້ງໜຶ່ງ ຂອງກະຊວງກະສິກຳ ແລະ ສິ່ງແວດລ້ອມ ທີ່ກວມເອົາແຂວງຄຳມ່ວນ ແລະ ແຂວງບໍລິຄຳໄຊ, ຊຶ່ງເປັນຫົວໜ່ວຍຈັດຕັ້ງປະຕິບັດຕົວຈິງ ຕາມການຊີ້ນຳທາງດ້ານວິຊາການ ຂອງກົມປ່າໄມ້ ໃນການຄຸ້ມຄອງ, ອະນຸລັກ, ປົກປັກຮັກສາ, ພັດທະນາ ແລະ ນຳໃຊ້ ປ່າໄມ້, ທີ່ດິນປ່າໄມ້, ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ໃຫ້ມີຄວາມຍືນຍົງ.

## ໝວດທີ 2
## ໜ້າທີ່ ແລະ ຂອບເຂດສິດ

**ມາດຕາ 3 ໜ້າທີ່**

ກອງຄຸ້ມຄອງອຸທິຍານແຫ່ງຊາດ ນາກາຍ-ນ້ຳເທີນ ມີໜ້າທີ່ ດັ່ງນີ້:

1. ປະຕິບັດ ລັດຖະທຳມະນູນ, ກົດໝາຍ, ມະຕິ ຂອງສະພາແຫ່ງຊາດ, ລັດຖະບັນຍັດ, ດຳລັດ, ມະຕິ, ຄຳສັ່ງ, ຂໍ້ຕົກລົງ, ຄຳແນະນຳ, ແຈ້ງການ, ນິຕິກຳອື່ນ ຂອງຂັ້ນເທິງ ແລະ ກະຊວງກະສິກຳ ແລະ ສິ່ງແວດລ້ອມ ວາງອອກຢ່າງເຂັ້ມງວດ;
2. ເຜີຍແຜ່, ເຊື່ອມຊຶມ, ຄົ້ນຄວ້າ, ຜັນຂະຫຍາຍ ແນວທາງນະໂຍບາຍ ຂອງພັກ ແລະ ລັດຖະບານ, ແຜນຍຸດທະສາດຂອງຂະແໜງກະສິກຳ ແລະ ສິ່ງແວດລ້ອມ ກ່ຽວກັບວຽກງານ ຄຸ້ມຄອງ, ປົກປັກຮັກສາ, ພັດທະນາ ແລະ ນຳໃຊ້ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ມາເປັນແຜນງານ ແລະ ໂຄງການສະເພາະ ຂອງຕົນ ພ້ອມທັງຄຸ້ມຄອງ ແລະ ຈັດຕັ້ງປະຕິບັດ ໃຫ້ໄດ້ຮັບຜົນດີ;
3. ຄົ້ນຄວ້ານຳສະເໜີຂັ້ນເທິງ ປັບປຸງກົງຈັກການຈັດຕັ້ງ, ກຳນົດຕຳແໜ່ງງານ, ສ້າງແຜນບຳລຸງກໍ່ສ້າງ, ການບັນຈຸ-ສັບຊ້ອນ ພະນັກງານ-ລັດຖະກອນ, ພາລະກອນ, ຄຸ້ມຄອງ ສະຖິຕິ ແລະ ຊີວະປະຫວັດ ຂອງພະນັກງານ-ລັດຖະກອນ, ພາລະກອນ ຂອງຕົນ ແຕ່ລະໄລຍະ; ປະຕິບັດນະໂຍບາຍ, ປະເມີນຜົນ ພະນັກງານ-ລັດຖະກອນ ໃຫ້ເໝາະສົມ, ຍ້ອງຍໍຜູ້ທີ່ມີຜົນງານດີເດັ່ນ ແລະ ປະຕິບັດວິໄນຕໍ່ຜູ້ກະທຳຜິດ ກົດໝາຍ, ລະບຽບການ ທີ່ໄດ້ກຳນົດໄວ້ ແລະ ປັບປຸງແບບແຜນວິທີເຮັດວຽກ, ກົນໄກການຄຸ້ມຄອງບໍລິຫານ ຂອງຕົນ ໃຫ້ມີປະສິດທິຜົນ;
4. ສ້າງແຜນການຄຸ້ມຄອງ, ປົກປັກຮັກສາ ແລະ ພັດທະນາ ເຂດອຸທິຍານ ແບບມີສ່ວນຮ່ວມ ຂອງຂະແໜງການ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ ພ້ອມທັງຈັດຕັ້ງປະຕິບັດແຜນດັ່ງກ່າວ ໃຫ້ໄປຕາມຈຸດປະສົງ, ຄາດໝາຍ ແລະ ຕົວຊີ້ວັດ ທີ່ກຳນົດໄວ້ໃນແຕ່ລະໄລຍະ;
5. ຄົ້ນຄວ້າ ແລະ ກຳນົດ ຮູບແບບການພັດທະນາຊີວິດການເປັນຢູ່ ຄຽງຄູ່ກັບການອະນຸລັກແບບຍືນຍົງ ໃຫ້ແກ່ບ້ານທີ່ຢູ່ໃນ ແລະ ອ້ອມຂ້າງ ເຂດອຸທິຍານ ເພື່ອສ້າງເປັນບ້ານພັດທະນາ; ຄຸ້ມຄອງ, ອະນຸລັກ ແລະ ປົກປັກຮັກສາ ປ່າໄມ້, ທີ່ດິນປ່າໄມ້, ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຕິດພັນກັບການພັດທະນາກະສິກຳ ໃນຂອບເຂດທີ່ໄດ້ກຳນົດຕາມແຜນຈັດສັນ; ຊຸກຍູ້ສົ່ງເສີມການຜະລິດກະສິກຳແບບຍືນຍົງ ເປັນມິດຕໍ່ສິ່ງແວດລ້ອມ;
6. ປະສານສົມທົບກັບຂະແໜງການ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ ເຂົ້າຮ່ວມຈັດຕັ້ງປະຕິບັດຂະບວນການຮັບຮູ້ສິດນຳໃຊ້ທີ່ດິນຂອງປະຊາຊົນໃນເຂດອຸທິຍານ ຕາມຄຳສັ່ງ ແລະ ຄຳແນະນຳ ຂອງລັດຖະບານ;

7. ເປັນເຈົ້າການປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ຕິດຕາມ ແລະ ກວດກາ ການປະຕິບັດບັນດາກິດຈະການ ແລະ ໂຄງການລົງທຶນຕ່າງໆ ທີ່ຢູ່ໃນ ແລະ ອ້ອມຂ້າງ ເຂດອຸທິຍານ ທີ່ໄດ້ຮັບອະນຸມັດຈາກລັດຖະບານ;
8. ຄົ້ນຄວ້າ ແລະ ມີຄຳເຫັນ ຕໍ່ການສະເໜີ ຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ກ່ຽວກັບການດຳເນີນກິດຈະການຕ່າງໆ ຢູ່ໃນເຂດອຸທິຍານ;
9. ປະສານສົມທົບກັບຂະແໜງການສາຍຕັ້ງ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນທີ່ກ່ຽວຂ້ອງ ດຳເນີນການສຳຫຼວດ, ເກັບກຳຂໍ້ມູນ, ກຳນົດ ແລະ ປັກຫຼັກໝາຍ ຂອບເຂດ, ວາງແຜນນຳໃຊ້ ທີ່ດິນ ແລະ ປ່າໄມ້, ກຳນົດແຜນຈັດສັນ ແລະ ຄຸ້ມຄອງ ໃນແຕ່ລະໄລຍະ ໃຫ້ສອດຄ່ອງຕາມກົດໝາຍ ແລະ ລະບຽບການກ່ຽວຂ້ອງ; ຈັດຕັ້ງປະຕິບັດວຽກງານ ຕາມແຜນຈັດສັນປ່າສະຫງວນ ແລະ ເພີ່ມທະວີຄວາມເຂັ້ມງວດ ໃນການຄຸ້ມຄອງ, ປົກປັກຮັກສາ, ພັດທະນາ ແລະ ນຳໃຊ້ ປ່າໄມ້, ທີ່ດິນປ່າໄມ້, ຕ້ານ ແລະ ສະກັດກັ້ນ ການບຸກລຸກທຳລາຍ ປ່າໄມ້, ທີ່ດິນປ່າໄມ້ ແລະ ໄຟໄໝ້ລາມປ່າ ໃນເຂດປ່າສະຫງວນ;
10. ເກັບກຳ, ສັງລວມ, ສ້າງ ແລະ ຄຸ້ມຄອງຂໍ້ມູນ-ຂ່າວສານ ກ່ຽວກັບປ່າໄມ້, ທີ່ດິນປ່າໄມ້, ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ຖິ່ນທີ່ຢູ່ອາໄສສຳຄັນ ຂອງຊະນິດພັນພືດ ແລະ ພັນສັດປ່າ ທີ່ຫາຍາກ ແລະ ໃກ້ຈະສູນພັນ ເພື່ອເປັນຖານຂໍ້ມູນ, ສູນຮຽນຮູ້ ໃຫ້ແກ່ການສຶກສາຄົ້ນຄວ້າ ກ່ຽວກັບການຄຸ້ມຄອງ, ອະນຸລັກ, ປົກປັກຮັກສາ, ພັດທະນາ ແລະ ນຳໃຊ້ ປ່າໄມ້, ທີ່ດິນປ່າໄມ້, ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ໃຫ້ມີຄວາມຍືນຍົງ;
11. ປຸກລະດົມ, ຂົນຂວາຍ, ໂຄສະນາເຜີຍແຜ່ ກົດໝາຍ, ລະບຽບການ ເພື່ອປູກຈິດສຳນຶກ ແລະ ສ້າງຄວາມເຂັ້ມແຂງ ໃຫ້ແກ່ປະຊາຊົນ ພ້ອມທັງຊຸກຍູ້ ອົງການປົກຄອງບ້ານ ໃນການສ້າງຕັ້ງຈຸງານກະສິກຳ ແລະ ສິ່ງແວດລ້ອມ ຂອງໜ່ວຍງານເສດຖະກິດ-ການເງິນບ້ານ ແລະ ອອກລະບຽບການຄຸ້ມຄອງ ປ່າໄມ້, ທີ່ດິນປ່າໄມ້, ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແບບມີສ່ວນຮ່ວມ;
12. ຊຸກຍູ້ ແລະ ສົ່ງເສີມ ວຽກງານ ກ້າເບ້ຍ, ປູກໄມ້, ຟື້ນຟູປ່າ ແບບທຳມະຊາດ, ພືດເປັນຢາ ແລະ ເຄື່ອງປ່າຂອງດົງ ຕາມແຜນຈັດສັນ ໃຫ້ມີຄວາມຍືນຍົງ;
13. ສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ສຶກສາທ່າແຮງ ແລະ ຄວາມຕ້ອງການຂອງບ້ານ ກ່ຽວກັບການນຳໃຊ້ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຕາມຮີດຄອງປະເພນີ, ສາທາລະນະປະໂຫຍດ ແລະ ປັບປຸງຊີວິດການເປັນຢູ່ຂອງປະຊາຊົນ ແນໃສ່ສ້າງແຫຼ່ງລາຍຮັບເພີ່ມທີ່ຕິດພັນກັບການຈັດສັນອາຊີບຄົງທີ່ໃຫ້ປະຊາຊົນ ພ້ອມທັງຊຸກຍູ້, ຕິດຕາມ, ກວດກາ ການປະຕິບັດ ແຜນການນຳໃຊ້ ແລະ ລະບຽບການທີ່ໄດ້ກຳນົດ ໃຫ້ແຕ່ລະບ້ານ;
14. ກຳນົດຈຸດປ້ອມຍາມ ເຂົ້າ-ອອກ ຕາມເສັ້ນທາງຜ່ານເຂດອຸທິຍານ, ປ້ອມຍາມປ່າ ພ້ອມທັງດຳເນີນການກວດກາ, ລາດຕະເວນຕາມຈຸດຫຼໍ່ແຫຼມ ຢ່າງເປັນປົກກະຕິ ແລະ ຕໍ່ເນື່ອງ, ກໍລະນີພົບເຫັນການລະເມີດ ກົດໝາຍ ແລະ ລະບຽບການເຊິ່ງໜ້າ ຕ້ອງໄດ້ສັ່ງ ຢຸດຕິ, ກັກ, ຍຶດ, ເກັບກຳຂໍ້ມູນ ແລະ ຫຼັກຖານ ເພື່ອສັງລວມລາຍງານ ແລະ ສົ່ງຂໍ້ມູນ, ຫຼັກຖານຕໍ່ເຈົ້າໜ້າທີ່ກ່ຽວຂ້ອງ ພ້ອມທັງເຂົ້າຮ່ວມ ແລະ ຕິດຕາມ ການດຳເນີນຂະບວນການຍຸຕິທຳ;
15. ຄຸ້ມຄອງ ແລະ ຈັດຕັ້ງປະຕິບັດ ໂຄງການ ພ້ອມທັງຕິດຕາມ, ກວດກາ ແລະ ປະເມີນຜົນ ການປະຕິບັດວຽກງານຂອງຊ່ຽວຊານ ພາຍໃນ ແລະ ຕ່າງປະເທດ ລວມທັງອຳນວຍຄວາມສະດວກໃນການເຄື່ອນໄຫວປະຕິບັດໜ້າທີ່ໃນຂອບເຂດຄວາມຮັບຜິດຊອບ ຂອງກອງຄຸ້ມຄອງອຸທິຍານ;
16. ເຜີຍແຜ່, ເຊື່ອມຊຶມ ນະໂຍບາຍ, ລະບຽບ, ກົດໝາຍ ກ່ຽວກັບວຽກງານຄຸ້ມຄອງ, ອະນຸລັກ, ປົກປັກຮັກສາ, ພັດທະນາ ແລະ ນຳໃຊ້ ປ່າໄມ້, ທີ່ດິນປ່າໄມ້, ຊັບພະກອນທຳມະຊາດ ແລະ ສິ່ງແວດລ້ອມ ຢູ່ໃນເຂດອຸທິຍານ ພ້ອມທັງຕິດຕາມ, ກວດກາ ການຈັດຕັ້ງປະຕິບັດວຽກງານ ຂອງພະນັກງານ-ລັດຖະກອນ ທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນ;

17. ຄຸ້ມຄອງ ແລະ ນຳໃຊ້ ທຶນ, ງົບປະມານ, ວັດຖຸ-ອຸປະກອນ ແລະ ຊັບສິນ ທີ່ລັດ, ບໍລິສັດໄຟຟ້ານ້ຳເທີນ 2 ແລະ ຜູ້ໃຫ້ການຊ່ວຍເຫຼືອອື່ນມອບໃຫ້ກອງຄຸ້ມຄອງອຸທິຍານ ດ້ວຍຄວາມໂປ່ງໃສ ແລະ ມີປະສິດທິຜົນ;
18. ສ້າງແຜນການຈັດຊື້-ຈັດຈ້າງ ຂອງກອງຄຸ້ມຄອງອຸທິຍານ ເພື່ອໃຫ້ກົມປ່າໄມ້ ຄົ້ນຄວ້າ ແລະ ນຳສະເໜີ ຄະນະກຳມະການບໍລິຫານອຸທິຍານແຫ່ງຊາດ ນາກາຍ-ນ້ຳເທີນ ພິຈາລະນາ;
19. ຍາດແຍ່ງເອົາການຮ່ວມມື ແລະ ການຊ່ວຍເຫຼືອ ດ້ານທຶນຮອນ, ເຕັກນິກວິທະຍາສາດ-ວິຊາການ ຈາກພາຍໃນ ແລະ ຕ່າງປະເທດ ໃນການຄຸ້ມຄອງ, ປົກປັກຮັກສາ ແລະ ພັດທະນາ ເຂດອຸທິຍານ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ;
20. ເປັນເຈົ້າການປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ຈັດຕັ້ງປະຕິບັດວຽກງານຂຶ້ນບັນຊີ ໃນລະດັບພາກພື້ນ ແລະ ສາກົນ ທີ່ກ່ຽວຂ້ອງ;
21. ເປັນເຈົ້າການກະກຽມເອກະສານລາຍງານກອງປະຊຸມສະໄໝ ສາມັນ ແລະ ວິສາມັນ ຂອງກອງຄຸ້ມຄອງອຸທິຍານ ເປັນຕົ້ນ ບົດສະຫຼຸບ, ຕີລາຄາ ແລະ ຖອດຖອນບົດຮຽນການຈັດຕັ້ງປະຕິບັດວຽກງານ ຄຸ້ມຄອງ, ປົກປັກຮັກສາ ແລະ ພັດທະນາ ເຂດອຸທິຍານ ປະຈຳ 6 ເດືອນ, ປະຈຳປີ ລວມທັງບົດລາຍງານ ຂອງອົງການກວດກາ ແລະ ກວດສອບບັນຊີເອກະລາດ;
22. ສະຫຼຸບລາຍງານການຈັດຕັ້ງປະຕິບັດວຽກງານ ຄຸ້ມຄອງ, ອະນຸລັກ, ປົກປັກຮັກສາ, ພັດທະນາ ແລະ ນຳໃຊ້ ປ່າໄມ້, ທີ່ດິນປ່າໄມ້, ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ປະຈຳເດືອນ, 3 ເດືອນ, 6 ເດືອນ, 1 ປີ, ກາງສະໄໝ ແລະ 5 ປີ ໃຫ້ຂັ້ນເທິງ ຢ່າງເປັນປົກກະຕິ;
23. ປະຕິບັດໜ້າທີ່ອື່ນ ຕາມທີ່ກຳນົດໄວ້ໃນນິຕິກຳອື່ນ ແລະ ການມອບໝາຍ ຂອງຂັ້ນເທິງ.

**ມາດຕາ 4 ຂອບເຂດສິດ**

ກອງຄຸ້ມຄອງອຸທິຍານແຫ່ງຊາດ ນາກາຍ-ນ້ຳເທີນ ມີສິດ ດັ່ງນີ້:

1. ສະເໜີ ປັບປຸງການຈັດຕັ້ງ, ການກຳນົດຕຳແໜ່ງງານ, ບັນຈຸ, ແຕ່ງຕັ້ງ, ສັບຊ້ອນ ແລະ ຈັດວາງບຸກຄະລາກອນ ຕາມການແບ່ງຂັ້ນຄຸ້ມຄອງ ບົນພື້ນຖານສອດຄ່ອງກັບກົດໝາຍ ແລະ ລະບຽບການກຳນົດໄວ້ ເພື່ອນຳສະເໜີຂັ້ນເທິງ ພິຈາລະນາ;
2. ສະເໜີປະຕິບັດນະໂຍບາຍຍ້ອງຍໍ ແລະ ປະຕິບັດວິໄນ ຕໍ່ພະນັກງານ-ລັດຖະກອນ ທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນ ຕາມກົດໝາຍ ແລະ ລະບຽບການທີ່ກຳນົດໄວ້;
3. ພົວພັນ ແລະ ປະສານສົມທົບກັບ ກົມປ່າໄມ້, ບັນດາ ພະແນກການ ຂັ້ນແຂວງ, ຂະແໜງການ ທີ່ຂຶ້ນກັບພະແນກການ ຂັ້ນແຂວງ, ຫ້ອງການທີ່ກ່ຽວຂ້ອງ ຂັ້ນເມືອງ, ຕາແສງ ແລະ ບ້ານ, ກຳລັງປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ຂອງທ້ອງຖິ່ນ ແລະ ພື້ນທີ່ ເພື່ອໄກ່ເກ່ຍ ແລະ ແກ້ໄຂປະກົດການຫຍໍ້ທໍ້ຕ່າງໆ ທີ່ເກີດຂຶ້ນໃນເຂດອຸທິຍານ;
4. ປະສານສົມທົບ ແລະ ແລກປ່ຽນຂໍ້ມູນ-ຂ່າວສານ ເຊັ່ນ: ບົດບັນທຶກການຮ່ວມມືກັບ ອົງການຈັດຕັ້ງສາກົນ, ອົງການຈັດຕັ້ງທາງສັງຄົມ ພ້ອມທັງຈັດຕັ້ງ ແລະ ເຂົ້າຮ່ວມສຳມະນາ, ຝຶກອົບຮົມ, ທັດສະນະສຶກສາ ທັງພາຍໃນ ແລະ ຕ່າງປະເທດ ຕາມການມອບໝາຍ ຂອງຂັ້ນເທິງ;
5. ຊຸກຍູ້ພະນັກງານຫຼັກແຫຼ່ງ ແລະ ວິຊາການ ໃນຄວາມຮັບຜິດຊອບຂອງຕົນ ເຂົ້າຮ່ວມກອງປະຊຸມ ຫຼື ລາຍງານວຽກ ເປັນແຕ່ລະໄລຍະ, ເຂົ້າຮ່ວມການວາງສະແດງ ຕາມຄວາມຮຽກຮ້ອງຕ້ອງການ ຂອງວຽກງານ ແລະ ຍົກລະດັບຄວາມຮູ້ຄວາມສາມາດ ຂອງພະນັກງານ-ລັດຖະກອນ, ພາລະກອນ ໄລຍະສັ້ນ, ໄລຍະກາງ ແລະ ໄລຍະຍາວ ທັງພາຍໃນ ແລະ ຕ່າງປະເທດ;
6. ອອກແຈ້ງການ, ແຈ້ງເຊີນ ແລະ ຄຳແນະນຳ ໃຫ້ບັນດາຂະແໜງການ, ຫົວໜ່ວຍທຸລະກິດກະສິກຳ ແລະ ສິ່ງແວດລ້ອມ, ບັນດາບ້ານ ທີ່ຢູ່ໃນ ແລະ ອ້ອມຂ້າງ ເຂດອຸທິຍານ ພ້ອມທັງຈັດຕັ້ງປະຕິບັດການເຜີຍແຜ່ ລະບຽບ, ກົດໝາຍ, ສຳມະນາ, ຝຶກອົບຮົມ ຕາມວຽກວິຊາການ ແລະ ການມອບໝາຍ ຂອງຂັ້ນເທິງ;

6. ອອກແຈ້ງການ, ແຈ້ງເຊີນ ແລະ ຄຳແນະນຳ ໃຫ້ບັນດາຂະແໜງການ, ຫົວໜ່ວຍທຸລະກິດກະສິກຳ ແລະ ສິ່ງແວດລ້ອມ, ບັນດາບ້ານ ທີ່ຢູ່ໃນ ແລະ ອ້ອມຂ້າງ ເຂດອຸທິຍານ ພ້ອມທັງຈັດຕັ້ງປະຕິບັດການເຜີຍແຜ່ ລະບຽບ, ກົດໝາຍ, ສຳມະນາ, ຝຶກອົບຮົມ ຕາມວຽກວິຊາການ ແລະ ການມອບໝາຍ ຂອງຂັ້ນເທິງ;
7. ຄຸ້ມຄອງ ແລະ ນຳໃຊ້ອາວຸດ ເຂົ້າໃນການປະຕິບັດໜ້າທີ່ ແລະ ການເຄື່ອນໄຫວວຽກງານວິຊາການ ເຊັ່ນ: ການກວດກາ, ລາດຕະເວນ, ການສຳຫຼວດຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແລະ ໃນເວລາປະຈຳການ ຢູ່ພາກສະໜາມ, ປ້ອມຍາມ ເຂົ້າ-ອອກ ແລະ ປ້ອມຍາມປ່າ ຕາມການອະນຸມັດ ຂອງຂັ້ນເທິງ;
8. ຄົ້ນຄວ້າ ແລະ ສະເໜີ ທັດສະນະດ້ານວິຊາການ ກ່ຽວກັບການຂໍອະນຸມັດດຳເນີນກິດຈະການ ປ່າໄມ້, ເຄື່ອງປ່າຂອງດົງ, ສັດນ້ຳ-ສັດປ່າ ແລະ ການທ່ອງທ່ຽວທຳມະຊາດ, ປະຫວັດສາດ, ວັດທະນະທຳ ຂອງນັກລົງທຶນທັງພາຍໃນ ແລະ ຕ່າງປະເທດ ຕາມກົດໝາຍ ແລະ ລະບຽບການກຳນົດ;
9. ລົງລາຍເຊັນໃສ່ສັນຍາ ແລະ ດຳເນີນຂະບວນການຈັດຊື້-ຈັດຈ້າງ ຂອງກອງຄຸ້ມຄອງອຸທິຍານ ຕາມການຕົກລົງເຫັນດີຂອງຂັ້ນເທິງ;
10. ສັ່ງຢຸດຕິການບຸກລຸກທຳລາຍ ປ່າໄມ້, ທີ່ດິນປ່າໄມ້, ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ກັກ, ຍຶດ ຂອງກາງ, ເກັບກຳຂໍ້ມູນໃນເບື້ອງຕົ້ນແລ້ວສົ່ງສຳນວນຄະດີ ໃຫ້ເຈົ້າໜ້າທີ່ກ່ຽວຂ້ອງ ດຳເນີນຂະບວນການ ຕາມກົດໝາຍ;
11. ປະຕິບັດສິດອື່ນ ຕາມທີ່ໄດ້ກຳນົດໄວ້ໃນນິຕິກຳອື່ນ ແລະ ຕາມການມອບໝາຍ ຂອງຂັ້ນເທິງ.

## ໝວດທີ 3
## ໂຄງປະກອບການຈັດຕັ້ງ

### ມາດຕາ 5 ໂຄງປະກອບກົງຈັກ

ກອງຄຸ້ມຄອງອຸທິຍານແຫ່ງຊາດ ນາກາຍ-ນ້ຳເທີນ ມີໂຄງປະກອບກົງຈັກ ດັ່ງນີ້:

1. ໜ່ວຍງານບໍລິຫານ ແລະ ແຜນການ;
2. ໜ່ວຍງານຄຸ້ມຄອງ ແລະ ປົກປັກຮັກສາ;
3. ໜ່ວຍງານພັດທະນາ.

### ມາດຕາ 6 ໂຄງປະກອບດ້ານບຸກຄະລາກອນ

ກອງຄຸ້ມຄອງອຸທິຍານແຫ່ງຊາດ ນາກາຍ-ນ້ຳເທີນ ມີໂຄງປະກອບບຸກຄະລາກອນ ດັ່ງນີ້:

1. ຫົວໜ້າກອງ ຈຳນວນ 01 ທ່ານ, ມີຕຳແໜ່ງບໍລິຫານປະເພດ 4 ຖືກແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ໂດຍລັດຖະມົນຕີກະຊວງກະສິກຳ ແລະ ສິ່ງແວດລ້ອມ ໂດຍແມ່ນກົມປ່າໄມ້ ເປັນເສນາທິການໃນການຄົ້ນຄວ້າ ແລະ ນຳສະເໜີ ບົນພື້ນຖານຄວາມເປັນເອກະພາບກັບອົງການປົກຄອງທ້ອງຖິ່ນ ແລະ ພະແນກການທີ່ກ່ຽວຂ້ອງ. ຫົວໜ້າກອງ ມີຄວາມຮັບຜິດຊອບຕໍ່ ຄະນະກຳມະການບໍລິຫານອຸທິຍານແຫ່ງຊາດ ນາກາຍ-ນ້ຳເທີນ, ກົມປ່າໄມ້ ແລະ ພະແນກກະສິກຳ ແລະ ສິ່ງແວດລ້ອມ ແຂວງຄຳມ່ວນ ແລະ ແຂວງບໍລິຄຳໄຊ ກ່ຽວກັບຜົນສຳເລັດ ແລະ ຂໍ້ຂາດຕົກບົກຜ່ອງ ໃນການປະຕິບັດວຽກງານຂອງຕົນ.

   ໃນເວລາຫົວໜ້າກອງ ຕິດຂັດ ຕ້ອງມອບສິດໃຫ້ຮອງຫົວໜ້າກອງທ່ານໃດໜຶ່ງ ຮັກສາການແທນ.
2. ຮອງຫົວໜ້າກອງ ຈຳນວນໜຶ່ງ ຊ່ວຍຫົວໜ້າກອງ ຊີ້ນຳວຽກງານໃດໜຶ່ງ ຕາມການແບ່ງງານ ແລະ ການມອບໝາຍ, ຮັບຜິດຊອບຕໍ່ຫົວໜ້າກອງ ກ່ຽວກັບຜົນສຳເລັດ ແລະ ຂໍ້ຂາດຕົກບົກຜ່ອງ ຂອງວຽກງານທີ່ຕົນຊີ້ນຳ.

   ຮອງຫົວໜ້າກອງ ຜູ້ຮັກສາການແທນ ຕ້ອງລາຍງານວຽກງານທີ່ໄດ້ຈັດຕັ້ງປະຕິບັດ ໃນໄລຍະຮັກສາການແທນນັ້ນ ໃຫ້ຫົວໜ້າກອງ ຊາບ ພາຍຫຼັງກັບມາປະຈຳການ.

ສຳລັບການບັນຈຸ, ສັບຊ້ອນ, ແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ແມ່ນປະຕິບັດຕາມ ກົດໝາຍ ແລະ ລະບຽບການກຳນົດໄວ້.

## ໝວດທີ 4
## ໜ້າທີ່ ຂອງບັນດາໜ່ວຍງານ

### ມາດຕາ 7 ໜ້າທີ່ ຂອງໜ່ວຍງານບໍລິຫານ ແລະ ແຜນການ

ໜ່ວຍງານບໍລິຫານ ແລະ ແຜນການ ມີໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ ສ້າງ, ປັບປຸງ ລະບຽບການ, ກົນໄກການຄຸ້ມຄອງ ແລະ ນຳໃຊ້ ທຶນ, ງົບປະມານ, ວັດຖຸ-ອຸປະກອນ ແລະ ຊັບສິນ ທີ່ຂຶ້ນກັບກອງຄຸ້ມຄອງອຸທິຍານ ໃຫ້ສອດຄ່ອງກັບພຶດຕິກຳຕົວຈິງເປັນແຕ່ລະໄລຍະ ເພື່ອນຳສະເໜີຂັ້ນເທິງ ພິຈາລະນາ;
2. ສ້າງແຜນການ ຄຸ້ມຄອງ, ປົກປັກຮັກສາ ແລະ ພັດທະນາ ເຂດອຸທິຍານ ແບບມີສ່ວນຮ່ວມ ຂອງຂະແໜງການ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ ພ້ອມທັງຈັດຕັ້ງປະຕິບັດແຜນດັ່ງກ່າວ ໃຫ້ໄປຕາມຈຸດປະສົງ, ຄາດໝາຍ ແລະ ຕົວຊີ້ວັດ ທີ່ກຳນົດໄວ້ໃນແຕ່ລະໄລຍະ;
3. ຄຸ້ມຄອງ ແລະ ນຳໃຊ້ ທຶນ, ງົບປະມານ, ວັດຖຸ-ອຸປະກອນ ແລະ ຊັບສິນ ທີ່ລັດ, ບໍລິສັດໄຟຟ້ານ້ຳເທີນ 2 ແລະ ຜູ້ໃຫ້ການຊ່ວຍເຫຼືອອື່ນມອບໃຫ້ກອງຄຸ້ມຄອງອຸທິຍານ ດ້ວຍຄວາມໂປ່ງໃສ ແລະ ມີປະສິດທິພາບ;
4. ເປັນເຈົ້າການປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ຕິດຕາມ, ກວດກາປະເມີນຜົນ ການປະຕິບັດບັນດາກິດຈະການ ແລະ ໂຄງການລົງທຶນຕ່າງໆ ທີ່ຢູ່ໃນ ແລະ ອ້ອມຂ້າງ ເຂດອຸທິຍານ ທີ່ໄດ້ຮັບອະນຸມັດຈາກລັດຖະບານ;
5. ຄົ້ນຄວ້າ ແລະ ມີຄຳເຫັນ ຕໍ່ການສະເໜີຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ກ່ຽວກັບການດຳເນີນກິດຈະການຕ່າງໆ ຢູ່ໃນເຂດອຸທິຍານ;
6. ເປັນເຈົ້າການປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ຈັດຕັ້ງປະຕິບັດວຽກງານຂຶ້ນບັນຊີ ໃນລະດັບພາກພື້ນ ແລະ ສາກົນ ທີ່ກ່ຽວຂ້ອງ;
7. ເກັບກຳຂໍ້ມູນ, ຂຶ້ນບັນຊີ, ຄຸ້ມຄອງ, ຕິດຕາມ, ກວດກາ ແລະ ສ້ອມແປງ ສຳນັກງານ-ຫ້ອງການ, ພາຫະນະ, ວັດຖຸ-ອຸປະກອນ ແລະ ຊັບສິນ ຂອງກອງຄຸ້ມຄອງອຸທິຍານ ໃຫ້ສາມາດນຳໃຊ້ໄດ້ຍາວນານ;
8. ຄຸ້ມຄອງ, ນຳໃຊ້ ແລະ ເກັບຮັກສາ ບັນດາຊັບສິນທາງປັນຍາ ທີ່ກອງຄຸ້ມຄອງອຸທິຍານ ຮ່ວມກັບ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ດ້ວຍຄວາມຮັບຜິດຊອບ;
9. ເກັບກຳ, ຄຸ້ມຄອງ ສະຖິຕິ ແລະ ຊີວະປະຫວັດ ຂອງພະນັກງານ-ລັດຖະກອນ, ພາລະກອນ, ຊ່ຽວຊານ ແລະ ທີ່ປຶກສາດ້ານຕ່າງໆ ທີ່ຂຶ້ນກັບກອງຄຸ້ມຄອງອຸທິຍານ ເພື່ອສ້າງເປັນຖານຂໍ້ມູນບຸກຄະລາກອນ ແນໃສ່ຕອບສະໜອງໃຫ້ແກ່ການວາງແຜນການຄຸ້ມຄອງ-ນຳໃຊ້ພະນັກງານ-ລັດຖະກອນ ໃຫ້ສອດຄ່ອງກັບ ພາລະບົດບາດ, ສິດ ແລະ ໜ້າທີ່ ທີ່ໄດ້ກຳນົດໄວ້;
10. ຄົ້ນຄວ້ານຳສະເໜີຂັ້ນເທິງ ປັບປຸງກົງຈັກການຈັດຕັ້ງ, ກຳນົດຕຳແໜ່ງງານ, ສ້າງແຜນບຳລຸງກໍ່ສ້າງ, ການບັນຈຸ-ສັບຊ້ອນ ພະນັກງານ-ລັດຖະກອນ, ພາລະກອນ ບົນພື້ນຖານຄວາມສະເໝີພາບບົດບາດຍິງ-ຊາຍ; ປະຕິບັດນະໂຍບາຍ, ປະເມີນຜົນ ພະນັກງານ-ລັດຖະກອນ, ຊ່ຽວຊານ, ພະນັກງານຕາມສັນຍາ, ພະນັກງານຝຶກງານ ແລະ ນັກສຶກສາຝຶກງານ ໃຫ້ເໝາະສົມ, ຍ້ອງຍໍຜູ້ທີ່ມີຜົນງານດີເດັ່ນ ແລະ ສະເໜີປະຕິບັດວິໄນຕໍ່ຜູ້ກະທຳຜິດກົດໝາຍ, ລະບຽບການ ທີ່ໄດ້ກຳນົດໄວ້ ແລະ ປັບປຸງແບບແຜນວິທີເຮັດວຽກ, ກົນໄກການຄຸ້ມຄອງບໍລິຫານຂອງຕົນໃຫ້ມີປະສິດທິພາບ;

ນັກສຶກສາຝຶກງານ ໃຫ້ເໝາະສົມ, ຍ້ອງຍໍຜູ້ທີ່ມີຜົນງານດີເດັ່ນ ແລະ ສະເໜີປະຕິບັດວິໄນຕໍ່ຜູ້ກະທຳຜິດກົດໝາຍ, ລະບຽບການ ທີ່ໄດ້ກຳນົດໄວ້ ແລະ ປັບປຸງແບບແຜນວິທີເຮັດວຽກ, ກົນໄກການຄຸ້ມຄອງບໍລິຫານຂອງຕົນໃຫ້ມີປະສິດທິພາບ;

11. ສ້າງຖານຂໍ້ມູນ-ຂ່າວສານ ດ້ານຊັບພະຍາກອນທຳມະຊາດ, ຊີວະນາໆພັນ, ສັດນ້ຳ-ສັດປ່າ, ປ່າໄມ້, ພັນພືດ, ເຄື່ອງປ່າຂອງດົງ ທີ່ຫາຍາກ ແລະ ໃກ້ຈະສູນພັນ ໃນເຂດອຸທິຍານ; ແລກປ່ຽນຂໍ້ມູນຂ່າວສານດ້ານຊີວະນາໆພັນຮ່ວມກັບພາກສ່ວນທີ່ກ່ຽວຂ້ອງ ທັງພາຍໃນ ແລະ ຕ່າງປະເທດ, ການເຂົ້າເຖິງແຫຼ່ງທ່ອງທ່ຽວ, ສູນວາງສະແດງ ແລະ ບໍລິການການທ່ອງທ່ຽວທາງທຳມະຊາດ, ປະຫວັດສາດ ແລະ ວັດທະນະທຳເປັນແຕ່ລະໄລຍະ;

12. ຄົ້ນຄວ້າ ແລະ ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ນຳສະເໜີຂັ້ນເທິງພິຈາລະນາການປະກອບອາວຸດໃຫ້ແກ່ກອງຄຸ້ມຄອງອຸທິຍານ;

13. ຂຶ້ນແຜນ ແລະ ສະຫຼຸບ ບັນຊີລາຍຮັບ-ລາຍຈ່າຍງົບປະມານຕ່າງໆ ລວມທັງຜົນການເຄື່ອນໄຫວວຽກງານຕາມລະບຽບການ ຢ່າງເປັນປົກກະຕິ, ຕໍ່ເນື່ອງ ແລະ ທັນເວລາ;

14. ເກັບກຳ, ສັງລວມຂໍ້ມູນ ຂຽນບົດສະເໜີໂຄງການ ກ່ຽວກັບການຄຸ້ມຄອງ, ປົກປັກຮັກສາ, ພັດທະນາ ແລະ ນຳໃຊ້ ທີ່ດິນປ່າໄມ້, ປ່າໄມ້, ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ໃນເຂດອຸທິຍານ ເພື່ອສະເໜີຂໍງົບປະມານ ຈາກການລົງທຶນຂອງລັດ, ກອງທຶນປົກປັກຮັກສາສິ່ງແວດລ້ອມ ແລະ ປ່າໄມ້ ລວມທັງສະເໜີຂໍການສະໜັບສະໜູນຈາກຜູ້ໃຫ້ທຶນ ທັງພາຍໃນ ແລະ ຕ່າງປະເທດ;

15. ເປັນເຈົ້າການກະກຽມເອກະສານລາຍງານກອງປະຊຸມສະໄໝ ສາມັນ ແລະ ວິສາມັນ ຂອງກອງຄຸ້ມຄອງອຸທິຍານ ເປັນຕົ້ນ ບົດສະຫຼຸບ, ຕີລາຄາ ແລະ ຖອດຖອນບົດຮຽນການຈັດຕັ້ງປະຕິບັດວຽກງານ ຄຸ້ມຄອງ, ປົກປັກຮັກສາ ແລະ ພັດທະນາ ອຸທິຍານ ປະຈຳ 6 ເດືອນ, ປະຈຳປີ ລວມທັງບົດລາຍງານ ຂອງອົງການກວດກາ ແລະ ກວດສອບບັນຊີເອກະລາດ;

16. ຈັດກອງປະຊຸມຮ່ວມກັບຂະແໜງການທີ່ກ່ຽວຂ້ອງ ຂອງ 4 ເມືອງ, 2 ແຂວງ ຄື: ເມືອງນາກາຍ, ເມືອງບົວລະພາ ແລະ ເມືອງຍົມມະລາດ ແຂວງຄຳມ່ວນ ແລະ ເມືອງຄຳເກີດ ແຂວງບໍລິຄຳໄຊ ລວມທັງຕາແສງ, ບ້ານ ຢູ່ໃນເຂດພື້ນທີ່ດັ່ງກ່າວ ເພື່ອຄົ້ນຄວ້າພິຈາລະນາ ບັນຫາ, ໜ້າວຽກສຳຄັນ ແລະ ຈຳເປັນ ແຕ່ລະໄລຍະ;

17. ຄຸ້ມຄອງ ແລະ ເຜີຍແຜ່ ຂໍ້ມູນ-ຂ່າວສານ ຂອງກອງຄຸ້ມຄອງອຸທິຍານ ດ້ວຍຮູບການ ແລະ ວິທີການຕ່າງໆ ເຊັ່ນ: ເປັນເອກະສານ, ເປັນຮູບພາບໃນລະບົບດີຈີຕອນ ແລະ ປ້ອນເຂົ້າໃນຖານຂໍ້ມູນ, ຂຶ້ນເວບໄຊ ຂອງກອງຄຸ້ມຄອງອຸທິຍານ;

18. ຍາດແຍ່ງເອົາການຮ່ວມມື ແລະ ການຊ່ວຍເຫຼືອ ດ້ານທຶນຮອນ, ເຕັກນິກວິທະຍາສາດ-ວິຊາການ ຈາກພາຍໃນ ແລະ ຕ່າງປະເທດ ໃນການຄຸ້ມຄອງ, ປົກປັກຮັກສາ ແລະ ພັດທະນາ ເຂດອຸທິຍານ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ;

19. ຄົ້ນຄວ້າ, ສ້າງ ແລະ ດຳເນີນເອກະສານ ທີ່ຕິດພັນກັບວຽກງານຄຸ້ມຄອງອຸທິຍານ ພ້ອມທັງກວດກາຄວາມຖືກຕ້ອງ ແລະ ຄວາມສອດຄ່ອງ ຂອງເອກະສານ;

20. ຄຸ້ມຄອງ, ກວດກາ ເອກະສານ ຂາເຂົ້າ-ຂາອອກ, ຈໍລະຈອນ ແລະ ສຳເນົາເອກະສານ, ຮັກສາຕາປະທັບ, ແລະ ຄວາມເປັນລະບຽບຮຽບຮ້ອຍ ຢູ່ພາຍໃນການຄຸ້ມຄອງຂອງຕົນ;

21. ສ້າງແຜນການຈັດຊື້-ຈັດຈ້າງ ຂອງກອງຄຸ້ມຄອງອຸທິຍານ ເພື່ອໃຫ້ກົມປ່າໄມ້ ຄົ້ນຄວ້ານຳສະເໜີ ຄະນະກຳມະການບໍລິຫານ ພິຈາລະນາ;

22. ສ້າງແຜນການເຄື່ອນໄຫວວຽກງານ ແລະ ແຜນງົບປະມານຕ່າງໆ ໃນເຂດອຸທິຍານ ລວມທັງສະຫຼຸບລາຍງານການຈັດຕັ້ງປະຕິບັດວຽກງານ ຄຸ້ມຄອງ, ອະນຸລັກ, ປົກປັກຮັກສາ, ພັດທະນາ ແລະ ນຳໃຊ້ ທີ່ດິນປ່າໄມ້, ປ່າໄມ້, ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຂອງກອງຄຸ້ມອຸທິຍານ ປະຈຳເດືອນ, 3 ເດືອນ, 6 ເດືອນ, 9

**ມາດຕາ 8 ໜ້າທີ່ ຂອງໜ່ວຍງານຄຸ້ມຄອງ ແລະ ປົກປັກຮັກສາ**

ໜ່ວຍງານຄຸ້ມຄອງ ແລະ ປົກປັກຮັກສາ ມີໜ້າທີ່ ດັ່ງນີ້:

1. ເປັນເຈົ້າການ ໂຄສະນາ, ເຜີຍແຜ່ ບັນດາກົດໝາຍ, ຄຳສັ່ງ, ມະຕິ, ຂໍ້ຕົກລົງ, ລະບຽບການ, ຍຸດທະສາດ ແລະ ແຜນດຳເນີນງານ ກ່ຽວກັບການຄຸ້ມຄອງ, ອະນຸລັກ, ປົກປັກຮັກສາ, ພັດທະນາ ແລະ ນຳໃຊ້ ປ່າໄມ້, ທີ່ດິນປ່າໄມ້ ແລະ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ໃນເຂດອຸທິຍານ ຢ່າງເປັນປົກກະຕິ ແລະ ໃນວັນສຳຄັນຂອງຊາດ ແລະ ທ້ອງຖິ່ນ;
2. ສ້າງຄູ່ມື, ແຜ່ນພັບ, ໂປສເຕີ, ວີດີໂອສາລະຄະດີ, ຄລິບສຽງ ແລະ ເຄື່ອງມືອື່ນໆ ທີ່ພົວພັນກັບການອະນຸລັກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ສັດນ້ຳ-ສັດປ່າ, ຊີວະນາໆພັນ ແລະ ປ້ອງກັນໄຟໄໝ້ລາມປ່າ ໃນເຂດອຸທິຍານ;
3. ເປັນໃຈກາງປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ກຳນົດຮູບແບບ ແລະ ວິທີການໂຄສະນາ, ເຜີຍແຜ່ ບັນດານິຕິກຳທີ່ກ່ຽວຂ້ອງ ໃຫ້ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ ທີ່ຢູ່ໃນ ແລະ ອ້ອມຂ້າງ ເຂດອຸທິຍານ;
4. ສ້າງ, ປັບປຸງ, ຄຸ້ມຄອງ, ພັດທະນາ ແລະ ນຳໃຊ້ຂໍ້ມູນຂ່າວສານ ໂດຍເຊື່ອມຕໍ່ກັບລະບົບຂໍ້ມູນຂ່າວສານ ຊີວະນາໆພັນ ລະດັບຊາດ, ພາກພື້ນ ແລະ ສາກົນ;
5. ເປັນເຈົ້າການປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ດຳເນີນການ ສຳຫຼວດ, ເກັບກຳຂໍ້ມູນ, ທົບທວນຂອບເຂດ, ກຳນົດ ແລະ ປັກຫຼັກໝາຍ, ຕິດຕັ້ງປ້າຍ ຂອບເຂດອຸທິຍານ;
6. ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ດຳເນີນການສຳຫຼວດພື້ນທີ່ ມີຄວາມສຳຄັນທາງດ້ານປະຫວັດສາດ ແລະ ວັດທະນະທຳ, ກຳນົດເຂດແດນ ແລະ ແບ່ງເຂດຄຸ້ມຄອງ ເພື່ອສະໜອງຂໍ້ມູນຕໍ່ການວາງແຜນພັດທະນາ, ກຳນົດເຂດຕ່າງໆ ໃນວຽກງານຄຸ້ມຄອງ, ອະນຸລັກ, ປົກປັກຮັກສາຊີວະນາໆພັນ ແລະ ນຳໃຊ້ໃຫ້ມີຄວາມຍືນຍົງ;
7. ສ້າງແຜນຈັດສັນ ແລະ ຄຸ້ມຄອງ ເຂດຫວງຫ້າມເດັດຂາດ, ເຂດຄຸ້ມຄອງນຳໃຊ້, ເຂດກັນຊົນ, ເຂດພັດທະນາໂຄງການ ທີ່ໄດ້ຮັບການອະນຸມັດຈາກລັດຖະບານ ໃນເຂດອຸທິຍານ ໃນແຕ່ລະໄລຍະ;
8. ເປັນເຈົ້າການປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ທົບທວນ ແລະ ປັບປຸງ ແຜນຈັດສັນເຂດອຸທິຍານ ແຕ່ລະໄລຍະ;
9. ເປັນເຈົ້າການປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ຄົ້ນຄວ້າສ້າງກົນໄກ, ກຳນົດກົດລະບຽບໃນການຄຸ້ມຄອງ ຫຼື ສັນຍາ ການອະນຸລັກ, ປົກປັກຮັກສາ ທີ່ດິນປ່າໄມ້, ປ່າໄມ້ ແລະ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແບບມີສ່ວນຮ່ວມຂອງປະຊາຊົນ;
10. ດຳເນີນການສຳຫຼວດເຂດອຸທິຍານ ດ້ວຍການເກັບກຳ ແລະ ວິເຄາະຂໍ້ມູນ ກ່ຽວກັບສະພາບປ່າໄມ້, ຊີວະນາໆພັນ, ລະບົບນິເວດ, ເນື້ອທີ່ປົກຫຸ້ມປ່າໄມ້, ມວນສານທາດອາຍກາກໂບນິກ, ຊະນິດພັນ ສັດນ້ຳ, ສັດປ່າ, ພັນພືດ ແລະ ເຄື່ອງປ່າຂອງດົງ, ແຫຼ່ງນ້ຳ, ການນຳໃຊ້ທີ່ດິນ, ຂໍ້ຂັດແຍ່ງລະຫວ່າງຄົນ ແລະ ສັດປ່າເສດຖະກິດ-ສັງຄົມ ຂອງບ້ານ ທີ່ມີພື້ນທີ່ຢູ່ໃນ ແລະ ອ້ອມຂ້າງ ເຂດອຸທິຍານ;
11. ດຳເນີນການສຶກສາຄົ້ນຄວ້າ, ວິໄຈທາງດ້ານວິທະຍາສາດ ກ່ຽວກັບແມງໄມ້, ພັນ ສັດນ້ຳ, ສັດປ່າ ແລະ ພັນພືດ ທີ່ໃກ້ຈະສູນພັນ, ທໍລະນີສາດ, ຮ່ອງຮອຍປະຫວັດສາດ, ວັດທະນະທຳ, ມວນສານກາກບອນປ່າໄມ້ ແລະ ອື່ນໆ ໃນເຂດອຸທິຍານ;
12. ຄົ້ນຄວ້າ, ປັບປຸງ ບັນຊີຊະນິດພັນພືດ, ພັນສັດນ້ຳ-ສັດປ່າ ຢູ່ໃນເຂດອຸທິຍານ ໃນແຕ່ລະໄລຍະ ໃຫ້ມີຄວາມສອດຄ່ອງກັບລະບຽບກົດໝາຍ ແລະ ພຶດຕິກຳຕົວຈິງ;

13. ເປັນເຈົ້າການປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ໃນການເພີ່ມທະວີຄວາມເຂັ້ມງວດວຽກງານ ຄຸ້ມຄອງ, ປົກປັກຮັກສາ, ພັດທະນາ ແລະ ນຳໃຊ້ປ່າໄມ້, ທີ່ດິນປ່າໄມ້, ຕ້ານ ແລະ ສະກັດກັ້ນ ການບຸກລຸກທຳລາຍປ່າໄມ້, ທີ່ດິນປ່າໄມ້ ແລະ ໄຟໄໝ້ລາມປ່າ ໃນເຂດອຸທິຍານ;

14. ກຳນົດຈຸດປ້ອມຍາມເຂົ້າ-ອອກ, ປ້ອມຍາມປ່າ ພ້ອມທັງສ້າງແຜນການເຄື່ອນໄຫວ ດຳເນີນການກວດກາລາດຕະເວນຕາມຈຸດຫຼໍ່ແຫຼມ ຢ່າງເປັນປົກກະຕິ-ຕໍ່ເນື່ອງ ກໍລະນີພົບເຫັນການລະເມີດກົດໝາຍ ແລະ ລະບຽບການເຊິ່ງໜ້າ ຕ້ອງໄດ້ ສັ່ງຢຸດຕິ, ກັກ, ຍຶດ, ເກັບກຳຂໍ້ມູນ ແລະ ຫຼັກຖານ ເພື່ອສັງລວມລາຍງານ ຕໍ່ເຈົ້າໜ້າທີ່ກ່ຽວຂ້ອງ ພ້ອມທັງເຂົ້າຮ່ວມ ແລະ ຕິດຕາມ ການດຳເນີນຂະບວນການຍຸຕິທຳ;

15. ເປັນເຈົ້າການປະສານສົມທົບ ກຳລັງອາສາສະໝັກປ່າໄມ້ບ້ານ, ກຳລັງປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ແລະ ອົງການປົກຄອງ ຕາແສງ, ບ້ານ ທີ່ຢູ່ໃນ ແລະ ອ້ອມຂ້າງ ເຂດອຸທິຍານ ເພື່ອເຄື່ອນໄຫວລາດຕະເວນ ຕາມແຫຼ່ງຂ່າວ ແລະ ນຳໃຊ້ເຕັກໂນໂລຊີ ເຂົ້າໃນລະບົບການກວດກາລາດຕະເວນ ແລະ ຕິດຕາມຊີວະນາໆພັນ;

16. ເປັນໃຈກາງປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ໃນການຄຸ້ມຄອງ, ປ້ອງກັນ ແລະ ແກ້ໄຂປະກົດການຫຍໍ້ທໍ້ ທີ່ເກີດຈາກໄພພິບັດທາງທຳມະຊາດ "ໄພແຫ້ງແລ້ງ, ນ້ຳຖ້ວມ, ດິນຖະຫຼົ່ມ, ໄຟໄໝ້ລາມປ່າ" ດ້ວຍຄວາມຮັບຜິດຊອບສູງ;

17. ເປັນໃຈກາງປະສານສົມທົບກັບພາກສ່ວນກ່ຽວຂ້ອງ ຂຶ້ນບັນຊີ, ຄຸ້ມຄອງ ແລະ ນຳໃຊ້ອາວຸດ, ວັດຖຸ-ອຸປະກອນ ແລະ ເຄື່ອງມືຮັບໃຊ້ວຽກງານກວດກາລາດຕະເວນ ໃນເຂດອຸທິຍານ;

18. ເປັນໃຈກາງປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ແກ້ໄຂຂໍ້ຂັດແຍ່ງ ລະຫວ່າງ ປະຊາຊົນ ແລະ ສັດປ່າ ຢູ່ໃນເຂດອຸທິຍານ;

19. ເປັນເຈົ້າການປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ໃນການກັນ ແລະ ການຕ້ານພະຍາດໄມ້, ບົ້ງແມງ, ສັດຕູພືດ ແລະ ພະຍາດສັດປ່າ ດ້ວຍການເຝົ້າລະວັງ, ຕິດຕາມການເກີດ, ລະບາດພະຍາດ ໄມ້, ບົ້ງແມງ, ສັດຕູພືດ ແລະ ພະຍາດສັດປ່າ ລວມທັງຊະນິດພັນຕ່າງຖິ່ນຮຸກຮານ ເພື່ອປ້ອງກັນ ແລະ ແກ້ໄຂໃຫ້ມີປະສິດທິພາບ ແລະ ທັນເວລາ;

20. ຊຸກຍູ້, ສົ່ງເສີມ ແລະ ຊີ້ນຳ ບັນດາໂຄງການ ແລະ ນັກສຶກສາຝຶກງານ ທັງພາຍໃນ ແລະ ຕ່າງປະເທດ ທີ່ເຂົ້າມາດຳເນີນການສຶກສາ, ຄົ້ນຄວ້າ ດ້ານຕ່າງໆ ຢູ່ໃນເຂດອຸທິຍານ;

21. ເປັນເຈົ້າການປະສານສົມທົບກັບຂະແໜງການ, ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ ແລະ ການມີສ່ວນຮ່ວມຂອງປະຊາຊົນ ທີ່ຕັ້ງພູມລຳເນົາ ຢູ່ໃນເຂດອຸທິຍານ ເພື່ອຕິດຕາມ ແລະ ກວດກາ ໂຄງການລົງທຶນຕ່າງໆ, ປະເມີນ ແລະ ຄຸ້ມຄອງຜົນກະທົບຕໍ່ສິ່ງແວດລ້ອມ, ການຈັດຕັ້ງປະຕິບັດລຳດັບມາດຕະການຫຼີກລ່ຽງ, ຫຼຸດຜ່ອນ ແລະ ການຊົດເຊີຍ ການສູນເສຍຊີວະນາໆພັນ ໃນເຂດອຸທິຍານ;

22. ເປັນໃຈກາງປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ເກັບກຳ, ຂຶ້ນທະບຽນພາຫະນະທາງນ້ຳ "ເຮືອ" ເຄື່ອງມືຫາປາ ແລະ ສັງລວມເຂົ້າໃນລະບົບຖານຂໍ້ມູນ, ລວມທັງການຕິດຕາມ ປະເມີນສະຖານະພາບໃນແຕ່ລະໄລຍະ ເປັນປົກກະຕິ ແລະ ຕໍ່ເນື່ອງ;

23. ສະໜອງຂໍ້ມູນໃຫ້ໜ່ວຍງານບໍລິຫານ ແລະ ແຜນການ ຂຽນບົດສະເໜີໂຄງການ ກ່ຽວກັບການຄຸ້ມຄອງ, ປົກປັກຮັກສາ, ພັດທະນາ ແລະ ນຳໃຊ້ ປ່າໄມ້, ທີ່ດິນປ່າໄມ້ ແລະ ຊັບພະຍາກອນປ່າໄມ້ ໃນເຂດອຸທິຍານ;

24. ສ້າງແຜນການເຄື່ອນໄຫວວຽກງານ ແລະ ແຜນງົບປະມານຕ່າງໆ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ ລວມທັງສະຫຼຸບລາຍງານການຈັດຕັ້ງປະຕິບັດວຽກງານ ຂອງໜ່ວຍງານຄຸ້ມຄອງ ແລະ ປົກປັກຮັກສາ ປະຈຳ

24. ສ້າງແຜນການເຄື່ອນໄຫວວຽກງານ ແລະ ແຜນງົບປະມານຕ່າງໆ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ ລວມທັງສະຫຼຸບລາຍງານການຈັດຕັ້ງປະຕິບັດວຽກງານ ຂອງໜ່ວຍງານຄຸ້ມຄອງ ແລະ ປົກປັກຮັກສາ ປະຈຳເດືອນ, 3 ເດືອນ, 6 ເດືອນ, 9 ເດືອນ, ປະຈຳປີ, ກາງສະໄໝ ແລະ 5 ປີ ເພື່ອລາຍງານ ໃຫ້ຂັ້ນເທິງ ແລະ ພາກສ່ວນກ່ຽວຂ້ອງ ຕາມກຳນົດເວລາ;
25. ປະຕິບັດໜ້າທີ່ອື່ນ ຕາມການຕົກລົງ ແລະ ມອບໝາຍ ຂອງຂັ້ນເທິງ.

**ມາດຕາ 9 ໜ້າທີ່ ຂອງໜ່ວຍງານພັດທະນາ**

ໜ່ວຍງານພັດທະນາ ມີໜ້າທີ່ ດັ່ງນີ້:

1. ເປັນເຈົ້າການ ສ້າງ, ປັບປຸງ ບັນດານິຕິກຳລຸ່ມກົດໝາຍ; ໂຄສະນາ, ເຜີຍແຜ່ ບັນດາກົດໝາຍ, ຄຳສັ່ງ, ມະຕິ, ຂໍ້ຕົກລົງ, ລະບຽບການ, ຍຸດທະສາດ ແລະ ແຜນດຳເນີນງານ ກ່ຽວກັບວຽກງານການພັດທະນາປ່າໄມ້, ພັດທະນາການທ່ອງທ່ຽວ, ປັບປຸງຊີວິດການເປັນຢູ່ຂອງປະຊາຊົນ ແລະ ພັດທະນາບ້ານ ທີ່ຢູ່ໃນ ແລະ ອ້ອມຂ້າງ ເຂດອຸທິຍານ;
2. ຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດ ບັນດານິຕິກຳລຸ່ມກົດໝາຍ ແລະ ບົດແນະນຳ ດ້ານເຕັກນິກວິຊາການຕ່າງໆ ທີ່ຂັ້ນເທິງວາງອອກ;
3. ເປັນເຈົ້າການປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ດຳເນີນການ ສຳຫຼວດ, ປະເມີນການສູນເສຍຄວາມປົກຫຸ້ມປ່າໄມ້, ກຳນົດຈຸດ, ຮູບແບບ ແລະ ດຳເນີນການຟື້ນຟູ ລະບົບນິເວດປ່າໄມ້ ແລະ ຊີວະນາງພັນ;
4. ເປັນເຈົ້າການປະສານສົມທົບກັບຂະແໜງການສາຍຕັ້ງ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນທີ່ກ່ຽວຂ້ອງ ດຳເນີນການເກັບກຳຂໍ້ມູນເສດຖະກິດ-ສັງຄົມ, ຈັດສັນແບ່ງເຂດ ແລະ ການຮັບຮູ້ສິດການນຳໃຊ້ທີ່ດິນ ໃນເຂດທີ່ດິນປ່າໄມ້ ຕາມມະຕິ, ຄຳສັ່ງ ຂອງຂັ້ນເທິງ;
5. ຊຸກຍູ້, ສ້າງ ກຳລັງອາສາສະໝັກປ່າໄມ້ບ້ານ ແລະ ກຸ່ມເຍົາວະຊົນ ໃນບັນດາບ້ານ, ໂຮງຮຽນ ທີ່ຢູ່ໃນ ແລະ ອ້ອມຂ້າງ ເຂດອຸທິຍານ ເພື່ອການອະນຸລັກ ແລະ ກາຍເປັນບ້ານພັດທະນາປ່າໄມ້;
6. ເປັນເຈົ້າການໃນການປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ສ້າງສວນກ້າເບ້ຍໄມ້ ແລະ ສະໜອງເບ້ຍໄມ້ ໃຫ້ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ຢູ່ໃນ ແລະ ອ້ອມຂ້າງ ເຂດອຸທິຍານ;
7. ກຳນົດຫຼັກການ, ຮູບແບບ ແລະ ວິທີການ ຟື້ນຟູປ່າ ພ້ອມທັງດຳເນີນການຝຶກອົບຮົມ ວຽກງານການປູກ ແລະ ຟື້ນຟູປ່າ ໃຫ້ກັບປະຊາຊົນ ແລະ ການຈັດຕັ້ງທີ່ກ່ຽວຂ້ອງ;
8. ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ສຳຫຼວດ, ເກັບກຳຂໍ້ມູນ, ກຳນົດຫຼັກການ, ລະບຽບການທີ່ເໝາະສົມ ແລະ ວາງແຜນ ພັດທະນາການທ່ອງທ່ຽວ ແລະ ພັດທະນາບ້ານ ທີ່ຢູ່ໃນ ແລະ ອ້ອມຂ້າງ ເຂດອຸທິຍານ ໃຫ້ສອດຄ່ອງຕາມແຜນຈັດສັນ;
9. ກຳນົດ ເງື່ອນໄຂ, ຫຼັກການ, ລະບຽບການ ກ່ຽວກັບວຽກງານທ່ອງທ່ຽວທຳມະຊາດ, ປະຫວັດສາດ, ວັດທະນະທຳ ໃນເຂດອຸທິຍານ;
10. ຄົ້ນຄວ້າສ້າງແຜນຍຸດທະສາດ ກ່ຽວກັບການທ່ອງທ່ຽວໃນເຂດອຸທິຍານ ເປັນຕົ້ນ ການທ່ອງທ່ຽວທາງທຳມະຊາດ, ປະຫວັດສາດ ແລະ ວັດທະນະທຳ ແບບມີສ່ວນຮ່ວມຂອງປະຊາຊົນ ເພື່ອນຳສະເໜີຂັ້ນເທິງພິຈາລະນາຮັບຮອງ ແລະ ເປັນບ່ອນອີງໃນການຈັດຕັ້ງປະຕິບັດ;
11. ເປັນໃຈກາງປະສານສົມທົບກັບຜູ້ປະກອບການ, ຫົວໜ່ວຍທຸລະກິດ ແລະ ພາກສ່ວນກ່ຽວຂ້ອງ ເພື່ອດຶງດູດການທ່ອງທ່ຽວ ພ້ອມທັງດຳເນີນກິດຈະການທ່ອງທ່ຽວທຳມະຊາດ, ປະຫວັດສາດ, ວັດທະນະທຳ ໃນເຂດອຸທິຍານ;

12. ກຳນົດຮູບແບບ ແລະ ວິທີການໂຄສະນາ, ເຜີຍແຜ່ ການທ່ອງທ່ຽວທາງທຳມະຊາດ ດ້ວຍຮູບການຕ່າງໆ ຢ່າງກວ້າງຂວາງ ພ້ອມທັງຊຸກຍູ້ ແລະ ສ້າງເງື່ອນໄຂໃຫ້ປະຊາຊົນ ແລະ ການຈັດຕັ້ງທີ່ກ່ຽວຂ້ອງ ເຂົ້າມາມີສ່ວນຮ່ວມໃນການຄຸ້ມຄອງ, ບໍລິການ ການທ່ອງທ່ຽວ ແບບມີສ່ວນຮ່ວມ;
13. ດຳເນີນການກຳນົດລະບົບຖານຂໍ້ມູນ ກ່ຽວກັບວຽກງານທ່ອງທ່ຽວ, ເກັບກຳສະຖິຕິນັກທ່ອງທ່ຽວ, ຜະລິດຕະພັນການທ່ອງທ່ຽວ ໃນແຕ່ລະໄລຍະ;
14. ຄົ້ນຄວ້າ ປະກອບຄຳເຫັນ ກ່ຽວກັບບັນດາໂຄງການພັດທະນາການທ່ອງທ່ຽວ ໃນເຂດອຸທິຍານ ພ້ອມທັງຊຸກຍູ້, ຕິດຕາມ ແລະ ປະເມີນຜົນ ບັນດາໂຄງການດັ່ງກ່າວ ເປັນແຕ່ລະໄລຍະ;
15. ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ຄົ້ນຄວ້າ, ສຶກສາທ່າແຮງ ແລະ ຄວາມຕ້ອງການຂອງແຕ່ລະຄອບຄົວ ຫຼື ບ້ານ ໃນການກຳນົດກິດຈະກຳ, ເງື່ອນໄຂ ແລະ ມາດຕະຖານ ສຳລັບການສ້າງຄອບຄົວ ຫຼື ບ້ານຕົວແບບ ດ້ານການຄຸ້ມຄອງ, ອະນຸລັກ, ປົກປັກຮັກສາ, ພັດທະນາ ແຫຼ່ງທ່ອງທ່ຽວທາງທຳມະຊາດ, ປະຫວັດສາດ ແລະ ວັດທະນະທຳ ແບບມີສ່ວນຮ່ວມ ເພື່ອນຳສະເໜີຂັ້ນເທິງ ພິຈາລະນາ;
16. ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ຈັດຕັ້ງປະຕິບັດວຽກງານຫຼຸດຜ່ອນການປ່ອຍທາດອາຍເຮືອນແກ້ວ ຈາກການທຳລາຍປ່າໄມ້ ແລະ ການເຮັດໃຫ້ປ່າໄມ້ເສື່ອມໂຊມ (REDD+) ແລະ ການຈ່າຍຄ່າບໍລິການສິ່ງແວດລ້ອມ ໃນເຂດອຸທິຍານ;
17. ເປັນເຈົ້າການປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງ ສ້າງແຜນຈັດຕັ້ງການຝຶກອົບຮົມ ດ້ານວິຊາການຕິດພັນກັບການຄຸ້ມຄອງ, ປົກປັກຮັກສາ, ພັດທະນາ ແລະ ນຳໃຊ້ ປ່າໄມ້, ທີ່ດິນປ່າໄມ້, ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເປັນຕົ້ນ ການປູກ, ການລ້ຽງ ແລະ ການຈັດຕັ້ງກຸ່ມຜະລິດ ໂດຍຕິດພັນກັບວຽກງານສົ່ງເສີມບົດບາດຍິງ-ຊາຍ ແລະ ຄວາມກ້າວໜ້າຂອງແມ່ຍິງ ເພື່ອຊຸກຍູ້, ສົ່ງເສີມ ແລະ ພັດທະນາຊີວິດການເປັນຢູ່, ສ້າງອາຊີບ ຂອງປະຊາຊົນທີ່ອາໄສ ຢູ່ໃນ ແລະ ອ້ອມຂ້າງ ເຂດອຸທິຍານ;
18. ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ສ້າງຕັ້ງກຸ່ມ ຫຼື ສະຫະກອນ ປະເພດຕ່າງໆ ກ່ຽວກັບການກະສິກຳ-ປ່າໄມ້, ປູກຝັງ-ລ້ຽງສັດ, ຫັດຖະກຳ, ການບໍລິການ, ການຜະລິດ-ການສ້າງມູນຄ່າເພີ່ມ ຈາກຜະລິດຕະພັນ ແລະ ອື່ນໆ;
19. ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ກຳນົດລະບຽບການ, ກົນໄກການຕະຫຼາດ ແລະ ການຈັດວາງສະແດງສິນຄ້າ, ຮ້ານຄ້າ ຂອງປະຊາຊົນ, ກຸ່ມ ຫຼື ສະຫະກອນ ທີ່ໄດ້ຮັບການຊຸກຍູ້-ສົ່ງເສີມ;
20. ຈັດກອງປະຊຸມປຶກສາຫາລືແຕ່ລະຂັ້ນຮ່ວມກັບພາກສ່ວນກ່ຽວຂ້ອງ ເພື່ອແລກປ່ຽນບົດຮຽນ, ປະສົບການດ້ານຂໍ້ມູນ-ຂ່າວສານ ກ່ຽວກັບວຽກງານພັດທະນາກອງທຶນບ້ານ, ພັດທະນາຊີວິດການເປັນຢູ່ ຂອງປະຊາຊົນຢູ່ໃນ ແລະ ອ້ອມຂ້າງ ເຂດອຸທິຍານ;
21. ສະໜອງຂໍ້ມູນໃຫ້ໜ່ວຍງານບໍລິຫານ ແລະ ແຜນການ ຂຽນບົດສະເໜີໂຄງການ ກ່ຽວກັບການຄຸ້ມຄອງ, ປົກປັກຮັກສາ, ພັດທະນາ ແລະ ນຳໃຊ້ ທີ່ດິນປ່າໄມ້, ປ່າໄມ້, ຊັບພະຍາກອນປ່າທຳມະຊາດ ແລະ ສິ່ງແວດລ້ອມ ໃນເຂດອຸທິຍານ;
22. ສ້າງແຜນການເຄື່ອນໄຫວວຽກງານ ແລະ ແຜນງົບປະມານຕ່າງໆ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ ລວມທັງສະຫຼຸບລາຍງານການຈັດຕັ້ງປະຕິບັດວຽກງານພັດທະນາ ປະຈຳເດືອນ, 3 ເດືອນ, 6 ເດືອນ, 9 ເດືອນ, ປະຈຳປີ, ກາງສະໄໝ ແລະ 5 ປີ ເພື່ອລາຍງານ ໃຫ້ຂັ້ນເທິງ ແລະ ພາກສ່ວນກ່ຽວຂ້ອງ ຕາມກຳນົດເວລາ;
23. ປະຕິບັດໜ້າທີ່ອື່ນ ຕາມການຕົກລົງ ແລະ ມອບໝາຍ ຂອງຂັ້ນເທິງ.

## ໝວດທີ 5
## ຫຼັກການ ແລະ ແບບແຜນວິທີເຮັດວຽກ

### ມາດຕາ 10 ຫຼັກການ

ກອງຄຸ້ມຄອງອຸທິຍານແຫ່ງຊາດ ນາກາຍ-ນ້ຳເທີນ ເຄື່ອນໄຫວຕາມຫຼັກການ ດັ່ງນີ້:

1. ປະຕິບັດຕາມຫຼັກການລວມສູນປະຊາທິປະໄຕ, ຕົກລົງເປັນໝູ່ຄະນະ ກ່ຽວກັບບັນຫາລວມ ຂອງກອງ;
2. ປະຕິບັດລະບອບຫົວໜ້າດຽວ, ແບ່ງງານໃຫ້ບຸກຄົນຮັບຜິດຊອບ ຢ່າງລະອຽດຈະແຈ້ງ ແລະ ເສີມຂະຫຍາຍຫົວຄິດປະດິດສ້າງ ຂອງພະນັກງານ-ລັດຖະກອນ, ພາລະກອນ ທຸກລະດັບ;
3. ທຸກການເຄື່ອນໄຫວວຽກງານ ແມ່ນອີງໃສ່ ກົດໝາຍ, ລະບຽບການ ແລະ ຫຼັກການລວມຂອງພັກ-ລັດ, ນຳເອົາແນວທາງນະໂຍບາຍ ຂອງພັກ-ລັດຖະບານ ແລະ ນຳເອົາແຜນການປະຈຳປີ, ແຜນ 5 ປີ ຂອງກະຊວງກະສິກຳ ແລະ ສິ່ງແວດລ້ອມ ມາຈັດຕັ້ງຜັນຂະຫຍາຍ ໃຫ້ໄດ້ຮັບຜົນດີ.

### ມາດຕາ 11 ແບບແຜນວິທີເຮັດວຽກ

ກອງຄຸ້ມຄອງອຸທິຍານແຫ່ງຊາດ ນາກາຍ-ນ້ຳເທີນ ມີແບບແຜນວິທີເຮັດວຽກ ດັ່ງນີ້:

1. ເຮັດວຽກມີແຜນການ, ແຜນງານ ແລະ ໂຄງການ ຢ່າງລະອຽດ, ແກ້ໄຂວຽກງານຢ່າງມີຈຸດສຸມ ແລະ ມີເປົ້າໝາຍ ໃນແຕ່ລະໄລຍະ, ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ເພື່ອຮັບປະກັນການຈັດຕັ້ງປະຕິບັດວຽກງານໃຫ້ໄດ້ຮັບຜົນດີ;
2. ເຮັດວຽກມີການກວດກາ, ຕິດຕາມ, ຊຸກຍູ້, ສະຫຼຸບຖອດຖອນບົດຮຽນ ແລະ ຕີລາຄາຜົນໄດ້-ຜົນເສຍ ຂອງວຽກງານ ພ້ອມທັງປະຕິບັດລະບອບລາຍງານສ່ອງແສງ ຢ່າງເຂັ້ມງວດ;
3. ເຮັດວຽກຕ້ອງຕິດພັນກັບຮາກຖານ, ຕິດພັນກັບຕົວຈິງ, ຕິດພັນກັບຄະນະພັກ, ຄະນະນຳແຕ່ລະຂັ້ນ ເພື່ອຊຸກຍູ້, ຕິດຕາມ, ກວດກາ, ສະຫຼຸບຖອດຖອນບົດຮຽນ ແລະ ຕີລາຄາດ້ານດີ-ດ້ານອ່ອນ, ສະຫຼຸບ, ລາຍງານຂໍຄຳເຫັນ ໃນການຈັດຕັ້ງປະຕິບັດແຜນການ, ແຜນງານ, ໂຄງການ ເປັນແຕ່ລະໄລຍະ;
4. ປະຕິບັດລະບອບປະຊຸມ ປະຈຳເດືອນ, 3 ເດືອນ, 6 ເດືອນ, ປະຈຳປີ, ກາງສະໄໝ, 5 ປີ, ກອງປະຊຸມວິສາມັນ ເມື່ອມີກໍລະນີຈຳເປັນຮີບດ່ວນ;
5. ປະຕິບັດລະບອບລາຍງານ ໃຫ້ຄະນະກຳມະການ ບໍລິຫານອຸທະຍານແຫ່ງຊາດ ນາກາຍ-ນ້ຳເທີນ ແລະ ພາກສ່ວນທີ່ກ່ຽວຂ້ອງ ເປັນປົກກະຕິ ໂດຍຜ່ານກົມປ່າໄມ້, ກອງເລຂາຊ່ວຍວຽກ;
6. ປະຕິບັດການພົວພັນປະສານງານ ພາຍໃນ ແລະ ພາຍນອກ ໃຫ້ສອດຄ່ອງຕາມລະບຽບການ.

## ໝວດທີ 6
## ບົດບັນຍັດສຸດທ້າຍ

### ມາດຕາ 12 ງົບປະມານ, ຕາປະທັບ ແລະ ເຄື່ອງແບບ

ກອງຄຸ້ມຄອງອຸທິຍານແຫ່ງຊາດ ນາກາຍ-ນ້ຳເທີນ ມີງົບປະມານ, ຕາປະທັບ ແລະ ເຄື່ອງແບບ ເພື່ອນຳໃຊ້ເຂົ້າໃນການເຄື່ອນໄຫວວຽກງານ ທາງລັດຖະການ ຕາມກົດໝາຍ ແລະ ລະບຽບການ ທີ່ກ່ຽວຂ້ອງກຳນົດ.

**ມາດຕາ 13 ການຈັດຕັ້ງປະຕິບັດ**

ກອງຄຸ້ມຄອງອຸທິຍານແຫ່ງຊາດ ນາກາຍ-ນ້ຳເທີນ, ກົມປ່າໄມ້, ພະແນກກະສິກຳ ແລະ ສິ່ງແວດລ້ອມ ແຂວງຄຳມ່ວນ ແລະ ແຂວງບໍລິຄຳໄຊ, ຫ້ອງການ, ບັນດາກົມ, ສະຖາບັນ, ຫົວໜ່ວຍວິຊາການລະດັບສອງ ທີ່ ຂຶ້ນກັບກະຊວງກະສິກຳ ແລະ ສິ່ງແວດລ້ອມ, ຫົວໜ່ວຍວິຊາການສາຍຕັ້ງຂັ້ນທ້ອງຖິ່ນ ແລະ ພາກສ່ວນທີ່ ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ຢ່າງເຂັ້ມງວດ.

**ມາດຕາ 14 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນນຳໃຊ້ໄດ້ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ ແລະ ນຳໃຊ້ປ່ຽນແທນຂໍ້ຕົກລົງ ສະບັບ ເລກທີ 0314/ກປ, ລົງວັນທີ 25 ກຸມພາ 2020.

ລັດຖະມົນຕີ

ປອ. ລີນຄຳ ດວງສະຫວັນ